**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ**

ເລກທີ 203 /ລບ

ນະຄອນຫຼວງວຽງຈັນ, ວັນທີ 04.07.2017

# ດຳລັດ
## ວ່າດ້ວຍ ຕຳແໜ່ງບໍລິຫານຂອງພະນັກງານ-ລັດຖະກອນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ບົດສະເໜີລາຍງານ ຂອງລັດຖະມົນຕີ ກະຊວງພາຍໃນ ສະບັບເລກທີ 13/ພນ, ລົງວັນທີ 15 ພຶດສະພາ 2017.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຕຳແໜ່ງບໍລິຫານ ຂອງພະນັກງານ-ລັດຖະກອນ ເພື່ອເປັນບ່ອນອີງໃຫ້ແກ່ບັນດາອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການອຸດໜູນຕຳແໜ່ງບໍລິຫານ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດໃຫ້ມີຄວາມ ໂປ່ງໃສ, ເປັນທຳ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2 ຕຳແໜ່ງບໍລິຫານ**

ຕຳແໜ່ງບໍລິຫານ ແມ່ນ ຕຳແໜ່ງນຳພາ, ຄຸ້ມຄອງວຽກງານຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ຢູ່ໃນບັນດາອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

**ມາດຕາ 3 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ພະນັກງານການນຳລະດັບສູງ ແລະ ລັດຖະກອນທີ່ມີຕຳແໜ່ງບໍລິຫານ ໃນອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ຕໍາແໜ່ງບໍລິຫານ ຂອງພະນັກງານ-ລັດຖະກອນ

**ມາດຕາ 4 ຕໍາແໜ່ງບໍລິຫານຂອງພະນັກງານການນໍາລະດັບສູງ**

ຕໍາແໜ່ງບໍລິຫານ ຂອງພະນັກງານການນໍາລະດັບສູງ ຈັດຢູ່ ຊັ້ນ 6 ຊຶ່ງປະກອບມີ 7 ຂັ້ນ ດັ່ງນີ້ :

- ຊັ້ນ 6 ຂັ້ນ 7 ແມ່ນປະທານປະເທດ ຄວບຕໍາແໜ່ງເລຂາທິການໃຫຍ່;
- ຊັ້ນ 6 ຂັ້ນ 6 ແມ່ນປະທານປະເທດ ແລະ ເລຂາທິການໃຫຍ່;
- ຊັ້ນ 6 ຂັ້ນ 5 ແມ່ນປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ ແລະ ແລະ ຮອງປະທານປະເທດ;
- ຊັ້ນ 6 ຂັ້ນ 4 ແມ່ນກໍາມະການກົມການເມືອງສູນກາງພັກ;
- ຊັ້ນ 6 ຂັ້ນ 3 ແມ່ນເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແລະ ຮອງນາຍົກລັດຖະມົນຕີ;
- ຊັ້ນ 6 ຂັ້ນ 2 ແມ່ນກໍາມະການສູນກາງພັກ, ຫົວໜ້າຄະນະຂອງພັກ, ປະທານສູນກາງແນວລາວສ້າງຊາດ, ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການທຽບເທົ່າກະຊວງ, ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ, ລັດຖະມົນຕີ ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ປະທານ ຫຼື ເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຫຼື ທຽບເທົ່າ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາລັດຖະບານ, ປະທານອົງການກວດສອບແຫ່ງລັດ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ປະທານກໍາມາທິການສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການສໍານັກງານປະທານປະເທດ, ເລຂາຄະນະພັກນະຄອນຫຼວງ, ເລຂາຄະນະພັກແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ແລະ ຕໍາແໜ່ງອື່ນ ທຽບເທົ່າຕໍາແໜ່ງບໍລິຫານດັ່ງກ່າວ ທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການ;
- ຊັ້ນ 6 ຂັ້ນ 1 ແມ່ນກໍາມະການສໍາຮອງສູນກາງພັກ, ຮອງຫົວໜ້າຄະນະຂອງພັກ, ຮອງປະທານສູນກາງແນວລາວສ້າງຊາດ, ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການທຽບເທົ່າກະຊວງ, ຮອງລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ຮອງປະທານ ຫຼື ຮອງເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຫຼື ທຽບເທົ່າ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານອົງການກວດກາລັດຖະບານ, ຮອງປະທານອົງການກວດສອບແຫ່ງລັດ, ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ຮອງປະທານກໍາມາທິການສະພາແຫ່ງຊາດ, ຮອງເລຂາທິການສະພາແຫ່ງຊາດ, ຮອງຫົວໜ້າຫ້ອງວ່າການສໍານັກງານປະທານປະເທດ, ຫົວໜ້າທະບວງ, ຫົວໜ້າອົງການທຽບເທົ່າທະບວງ, ອະທິການບໍດີມະຫາວິທະຍາໄລ, ປະທານສະພາປະຊາຊົນ ຂັ້ນແຂວງ, ຮອງເລຂາຄະນະພັກນະຄອນຫຼວງ, ຮອງເລຂາຄະນະພັກແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຮອງເຈົ້າແຂວງ ແລະ ຕໍາແໜ່ງອື່ນ ທຽບເທົ່າຕໍາແໜ່ງບໍລິຫານດັ່ງກ່າວ ທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການ.

**ມາດຕາ 5 ຕໍາແໜ່ງບໍລິຫານຂອງລັດຖະກອນ**

ຕໍາແໜ່ງບໍລິຫານຂອງລັດຖະກອນ ຈັດຕາມລະດັບ ດັ່ງນີ້:

**ກ. ຜູ້ບໍລິຫານລະດັບສູງ**

1. **ປະເພດ 1**
   - ຮອງຫົວໜ້າທະບວງ, ຮອງຫົວໜ້າອົງການທຽບເທົ່າທະບວງ;
   - ຮອງປະທານສະພາປະຊາຊົນຂັ້ນແຂວງ;
   - ສະມາຊິກສະພາຜູ້ພິພາກສາສານປະຊາຊົນສູງສຸດ;
   - ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ທີ່ບໍ່ແມ່ນສະມາຊິກສະພາຜູ້ພິພາກສາ;

- ປະທານສານປະຊາຊົນພາກ;
- ຫົວໜ້າອົງການໄອຍະການປະຊາຊົນພາກ;
- ຫົວໜ້າອົງການກວດສອບປະຈຳພາກ;
- ຄະນະປະຈຳພັກ ກະຊວງ, ອົງການທຽບເທົ່າກະຊວງ; ຄະນະປະ ຈຳພັກແຂວງ, ນະຄອນຫຼວງ;
- ຕຳແໜ່ງອື່ນ ທຽບເທົ່າຕຳແໜ່ງບໍລິຫານປະເພດດັ່ງກ່າວ ທີ່ໄດ້ກຳນົດໄວ້ກົດໝາຍ ແລະ ລະບຽບການ.

**2. ປະເພດ 2**

- ຫົວໜ້າກົມ ແລະ ທຽບເທົ່າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ແລະ ອົງການທຽບເທົ່າທະບວງ;
- ເລຂາທິການ, ຫົວໜ້າກຳມາທິການສະພາປະຊາຊົນຂັ້ນແຂວງ;
- ຫົວໜ້າໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ ແລະ ອົງການທຽບເທົ່າກະຊວງ;
- ຮອງປະທານສານປະຊາຊົນພາກ, ຜູ້ພິພາກສາສານປະຊາຊົນສູງສຸດ, ປະທານສານປະຊາຊົນ ແຂວງ, ນະຄອນຫຼວງ;
- ຮອງຫົວໜ້າອົງການໄອຍະການປະຊາຊົນພາກ, ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ;
- ຮອງຫົວໜ້າອົງການກວດສອບປະຈຳພາກ;
- ຜູ້ອຳນວຍການໂຮງໝໍສູນກາງທີ່ຂຶ້ນກັບກະຊວງ;
- ຮອງອະທິການບໍດີ, ຄະນະບໍດີມະຫາວິທະຍາໄລ;
- ຜູ້ອຳນວຍການຂ່າວສານ, ຫົວໜ້າບັນນາທິການໜັງສືພິມ, ຜູ້ອຳນວຍການວິທະຍຸກະຈາຍສຽງແຫ່ງຊາດລາວ, ຜູ້ອຳນວຍການໂທລະພາບແຫ່ງຊາດລາວ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
- ກຳມະການພັກ ກະຊວງ, ອົງການທຽບເທົ່າກະຊວງ, ກຳມະການພັກ ແຂວງ, ນະຄອນຫຼວງ;
- ເລຂາຄະນະພັກ ເມືອງ, ເທດສະບານ, ນະຄອນ;
- ຕຳແໜ່ງອື່ນ ທຽບເທົ່າຕຳແໜ່ງບໍລິຫານປະເພດດັ່ງກ່າວ ທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**3. ປະເພດ 3**

- ຮອງຫົວໜ້າກົມ ຫຼື ທຽບເທົ່າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ຫຼື ອົງການທຽບເທົ່າທະບວງ;
- ຮອງເລຂາທິການ, ຮອງຫົວໜ້າກຳມາທິການສະພາປະຊາຊົນຂັ້ນແຂວງ;
- ຮອງຫົວໜ້າໜ່ວຍວິຊາການ ລະດັບ 1 ທີ່ຂຶ້ນກັບກະຊວງ ຫຼື ອົງການທຽບເທົ່າກະຊວງ;
- ຫົວໜ້າໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນກັບ ກົມ ຫຼື ທຽບເທົ່າກົມ;
- ປະທານສານປະຊາຊົນເຂດ, ຫົວໜ້າຄະນະສານ, ຜູ້ພິພາກສາຂອງສານປະຊາຊົນພາກ, ຮອງປະທານສານປະຊາຊົນ ແຂວງ, ນະຄອນຫຼວງ;
- ຫົວໜ້າອົງການໄອຍະການປະຊາຊົນເຂດ, ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ;
- ຫົວໜ້າຫ້ອງການສານປະຊາຊົນພາກ, ຫົວໜ້າຫ້ອງການໄອຍະການປະຊາຊົນພາກ, ຫົວໜ້າຫ້ອງການອົງການກວດສອບປະຈຳພາກ;
- ຮອງຜູ້ອຳນວຍການໂຮງໝໍສູນກາງທີ່ຂຶ້ນກັບກະຊວງ;
- ຜູ້ອຳນວຍການໂຮງໝໍພາກ;
- ຫົວໜ້າຫ້ອງການສຶກສາສົງສູນກາງ;
- ຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ ຫຼື ຫົວໜ້າຫ້ອງການສະພາການສຶກສາຊັ້ນສູງ ແຫ່ງຊາດ;
- ຜູ້ອຳນວຍການວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;

- ຮອງຄະນະບໍດີ, ຫົວໜ້າຫ້ອງການ, ຫົວໜ້າພາກວິຊາ, ຜູ້ອຳນວຍການຫໍສະໝຸດ, ຜູ້ອຳນວຍການສູນໃນມະຫາວິທະຍາໄລ;
- ຮອງຜູ້ອຳນວຍການຂ່າວສານ, ຫົວໜ້າບັນນາທິການວາລະສານ, ຮອງຫົວໜ້າບັນນາທິການໜັງສືພິມ, ຮອງຜູ້ອຳນວຍການວິທະຍຸກະຈາຍສຽງແຫ່ງຊາດລາວ, ຮອງຜູ້ອຳນວຍການໂທລະພາບແຫ່ງຊາດລາວ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ຜູ້ອຳນວຍການຫໍວັດທະນະທຳແຫ່ງຊາດ, ຜູ້ອຳນວຍການຫໍພິພິທະພັນແຫ່ງຊາດ, ຜູ້ອຳນວຍການສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ, ຫົວໜ້າສູນວັດທະນະທຳເດັກ, ຫົວໜ້າຫ້ອງການມໍລະດົກໂລກ;
- ຫົວໜ້າພະແນກຂອງຂະແໜງຂັ້ນແຂວງ;
- ຫົວໜ້າຫ້ອງວ່າການປົກຄອງຂັ້ນແຂວງ ຫຼື ທຽບເທົ່າ;
- ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ ຫຼື ຮອງເຈົ້ານະຄອນ;
- ປະທານ ຫຼື ເລຂາບັນດາອົງການຈັດຕັ້ງມະຫາຊົນ ແຂວງ, ນະຄອນຫຼວງ ທີ່ບໍ່ແມ່ນ ກຳມະການພັກ ແຂວງ, ນະຄອນຫຼວງ;
- ຮອງເລຂາຄະນະພັກ ເມືອງ, ເທດສະບານ, ນະຄອນ;
- ຄະນະປະຈຳພັກ ເມືອງ, ເທດສະບານ, ນະຄອນ;
- ຕຳແໜ່ງອື່ນ ທຽບເທົ່າຕຳແໜ່ງບໍລິຫານປະເພດດັ່ງກ່າວ ທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

## ຂ. ຕຳແໜ່ງຜູ້ບໍລິຫານລະດັບກາງ

1. **ປະເພດ 4**
   - ຫົວໜ້າພະແນກ ຂອງກົມ ຫຼື ທຽບເທົ່າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ຫຼື ອົງການທຽບເທົ່າທະບວງ;
   - ຫົວໜ້າຫົວໜ່ວຍວິຊາການຕ່າງໆ ທີ່ຂຶ້ນກັບກົມ;
   - ຮອງຫົວໜ້າໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນ ກົມ ຫຼື ທຽບເທົ່າ;
   - ຮອງປະທານສານປະຊາຊົນເຂດ, ຫົວໜ້າຄະນະສານ, ຜູ້ພິພາກສາຂອງສານປະຊາຊົນ ແຂວງ, ນະຄອນຫຼວງ;
   - ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ, ຫົວໜ້າຂະແໜງການຂອງອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ;
   - ຮອງຫົວໜ້າຫ້ອງການສານປະຊາຊົນພາກ, ຮອງຫົວໜ້າຫ້ອງການອົງການໄອຍະການປະຊາຊົນພາກ, ຮອງຫົວໜ້າຫ້ອງການອົງການກວດສອບ ປະຈຳພາກ;
   - ຫົວໜ້າຫ້ອງການສານປະຊາຊົນ ແຂວງ, ນະຄອນຫຼວງ;
   - ຮອງຜູ້ອຳນວຍການໂຮງໝໍພາກ, ຫົວໜ້າພະແນກຂອງໂຮງໝໍສູນກາງ;
   - ຜູ້ອຳນວຍການໂຮງໝໍຂັ້ນແຂວງ, ຜູ້ອຳນວຍການໂຮງໝໍຊຸມຊົນ ປະເພດ ກ;
   - ຮອງຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ ຫຼື ຮອງຫົວໜ້າຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ;
   - ຮອງຫົວໜ້າຫ້ອງການສຶກສາສົງສູນກາງ;
   - ຮອງຜູ້ອຳນວຍການວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;
   - ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນກາງ;
   - ຫົວໜ້າພະແນກ ຂອງມະຫາວິທະຍາໄລ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບ 1 ທີ່ຂຶ້ນກັບກະຊວງ;
   - ຮອງຫົວໜ້າພາກວິຊາ, ຮອງຫົວໜ້າຫ້ອງການ, ຮອງຜູ້ອຳນວຍການຫໍສະໝຸດ ແລະ ຮອງຜູ້ອຳນວຍການສູນໃນມະຫາວິທະຍາໄລ;

- ຜູ້ອຳນວຍການ ໂຮງຮຽນມັດທະຍົມສຶກສາຕອນປາຍ, ມັດທະຍົມສຶກສາສົມບູນ;
- ຮອງຜູ້ອຳນວຍການຫໍວັດທະນະທຳແຫ່ງຊາດ, ຮອງຜູ້ອຳນວຍການຫໍພິພິທະພັນແຫ່ງຊາດ, ຮອງຜູ້ອຳນວຍການສຳນັກພິມ ແລະຈຳໜ່າຍປຶ້ມແຫ່ງລັດ, ຮອງຫົວໜ້າບັນນາທິການວາລະສານ, ຮອງຫົວໜ້າສູນວັດທະນະທຳເດັກ, ຮອງຫົວໜ້າຫ້ອງການມໍລະດົກໂລກ;
- ຫົວໜ້າ ພາສີປະຈຳເຂດ, ຄັງເງິນແຫ່ງຊາດ ປະຈຳແຂວງ, ນະຄອນຫຼວງ; ຫົວໜ້າສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ;
- ຮອງຫົວໜ້າພະແນກ ຂອງຂະແໜງຂັ້ນແຂວງ;
- ຮອງຫົວໜ້າຫ້ອງວ່າການປົກຄອງຂັ້ນແຂວງ ຫຼື ທຽບເທົ່າ;
- ຫົວໜ້າຫ້ອງການສັງກັດຫ້ອງວ່າການປົກຄອງຂັ້ນແຂວງ;
- ຫົວໜ້າຫ້ອງວ່າການປົກຄອງຂັ້ນເມືອງ ຫຼື ທຽບເທົ່າ;
- ຫົວໜ້າຫ້ອງການ ຂອງຂະແໜງການຂັ້ນເມືອງ;
- ກຳມະການພັກ ເມືອງ, ເທດສະບານ ຫຼື ນະຄອນ;
- ຮອງປະທານ ຫຼື ຮອງເລຂາບັນດາອົງການຈັດຕັ້ງມະຫາຊົນ ແຂວງ, ນະຄອນຫຼວງ ທີ່ບໍ່ແມ່ນກຳມະການພັກແຂວງ, ນະຄອນຫຼວງ;
- ຕຳແໜ່ງອື່ນ ທຽບເທົ່າຕຳແໜ່ງບໍລິຫານປະເພດດັ່ງກ່າວ ທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

2. **ປະເພດ 5**
- ຮອງຫົວໜ້າພະແນກ ຂອງກົມ ຫຼື ທຽບເທົ່າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ຫຼື ອົງການທຽບເທົ່າທະບວງ;
- ຫົວໜ້າຂະແໜງ ຂອງຫົວໜ່ວຍວິຊາການ ລະດັບ 2 ທີ່ຂຶ້ນກັບກົມ ຫຼື ທຽບເທົ່າກົມ;
- ຮອງຫົວໜ້າຫົວໜ່ວຍວິຊາການທີ່ຂຶ້ນກັບກົມ;
- ຫົວໜ້າຄະນະສານ, ຜູ້ພິພາກສາ ຂອງສານປະຊາຊົນເຂດ, ຮອງຫົວໜ້າຫ້ອງການສານປະຊາຊົນແຂວງ, ນະຄອນຫຼວງ, ຫົວໜ້າຫ້ອງການສານປະຊາຊົນເຂດ;
- ຮອງຂະແໜງອົງການໄອຍະການປະຊາຊົນເຂດ, ຫົວໜ້າໜ່ວຍງານອົງການໄອຍະການປະຊາຊົນເຂດ;
- ຮອງຜູ້ອຳນວຍການໂຮງໝໍຂັ້ນແຂວງ, ຮອງຜູ້ອຳນວຍການໂຮງໝໍຊຸມຊົນ ປະເພດ ກ, ຜູ້ອຳນວຍການໂຮງໝໍຊຸມຊົນ ປະເພດ ຂ;
- ຫົວໜ້າຂະແໜງ ຂອງໂຮງໝໍພາກ, ຮອງຫົວໜ້າພະແນກຂອງໂຮງໝໍສູນກາງ;
- ຫົວໜ້າຫ້ອງການສຶກສາສົງຂັ້ນແຂວງ;
- ຮອງຫົວໜ້າພະແນກ ຂອງມະຫາວິທະຍາໄລ, ສະຖາບັນ ຫຼື ຫົວໜ່ວຍວິຊາການລະດັບ 1 ທີ່ຂຶ້ນກັບກະຊວງ;
- ຫົວໜ້າໜ່ວຍວິຊາໃນມະຫາວິທະຍາໄລ;
- ຮອງຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນກາງ;
- ຮອງຜູ້ອຳນວຍການໂຮງຮຽນມັດທະຍົມສຶກສາຕອນປາຍ, ມັດທະຍົມສຶກສາສົມບູນ;
- ຫົວໜ້າຂະແໜງການສັງກັດວິທະຍາໄລ, ໂຮງຮຽນວິຊາຊີບຊັ້ນສູງ;
- ຜູ້ອຳນວຍການໂຮງຮຽນມັດທະຍົມສຶກສາຕອນຕົ້ນ;
- ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນຕົ້ນ;
- ຫົວໜ້າສະຖານີວິທະຍຸ, ໂທລະພາບ, ໜັງສືພິມ, ກອງສະແດງ, ຫໍພິພິທະພັນ, ຫໍສະໝຸດ, ຫໍວັດທະນະທຳ ຫຼື ກອງວິຊາການຢູ່ຂັ້ນແຂວງ;
- ຮອງຫົວໜ້າພາສີປະຈຳເຂດ, ຮອງຫົວໜ້າຄັງເງິນແຫ່ງຊາດຂັ້ນແຂວງ, ຮອງຫົວໜ້າສ່ວຍສາອາກອນຂັ້ນແຂວງ, ຫົວໜ້າດ່ານພາສີຊາຍແດນ;
- ຫົວໜ້າຂະແໜງ ຂອງຫ້ອງວ່າການປົກຄອງ ຂັ້ນແຂວງ ຫຼື ທຽບເທົ່າ;

- ຮອງຫົວໜ້າຫ້ອງການທີ່ສັງກັດຫ້ອງວ່າການປົກຄອງຂັ້ນແຂວງ ຫຼື ທຽບເທົ່າ;
- ຫົວໜ້າຂະແໜງຂອງພະແນກ ຂອງຂະແໜງການຂັ້ນແຂວງ;
- ຮອງຫົວໜ້າຫ້ອງວ່າການປົກຄອງຂັ້ນເມືອງ ຫຼື ທຽບເທົ່າ;
- ຮອງຫົວໜ້າຫ້ອງການ ຂອງຂະແໜງການຂັ້ນເມືອງ;
- ຕໍາແໜ່ງອື່ນ ທຽບເທົ່າຕໍາແໜ່ງບໍລິຫານປະເພດດັ່ງກ່າວ ທີ່ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ຄ. ຕໍາແໜ່ງຜູ້ບໍລິຫານລະດັບຕົ້ນ**

1. **ປະເພດ 6**
   - ຫົວໜ້າຂະແໜງ ຂອງກົມ ຫຼື ທຽບເທົ່າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ຫຼື ອົງການທຽບເທົ່າທະບວງ;
   - ຫົວໜ້າຂະແໜງ ຂອງຫົວໜ່ວຍວິຊາການລະດັບ 1 ທີ່ຂຶ້ນກັບກະຊວງ;
   - ຮອງຫົວໜ້າຂະແໜງ ຂອງຫົວໜ່ວຍວິຊາການລະດັບ 2 ທີ່ຂຶ້ນກັບກະຊວງ;
   - ຫົວໜ້າໜ່ວຍງານ ຂອງຫົວໜ່ວຍວິຊາການທີ່ຂຶ້ນກັບກົມ;
   - ຮອງຫົວໜ້າໜ່ວຍງານອົງການໄອຍະການປະຊາຊົນເຂດ;
   - ຜູ້ຊ່ວຍຜູ້ພິພາກສາ ຂອງສານປະຊາຊົນ, ຮອງຫົວໜ້າຫ້ອງການສານປະຊາຊົນເຂດ;
   - ຮອງຫົວໜ້າຂະແໜງໂຮງໝໍພາກ;
   - ຫົວໜ້າໜ່ວຍງານ ຂອງໂຮງໝໍຊຸມຊົນ ປະເພດ ກ;
   - ຜູ້ອໍານວຍການໂຮງໝໍນ້ອຍ ປະເພດ ກ;
   - ຫົວໜ້າໜ່ວຍງານ ຂອງໂຮງໝໍແຂວງ, ຮອງຜູ້ອໍານວຍການໂຮງໝໍຊຸມຊົນ ປະເພດ ຂ;
   - ຮອງຫົວໜ້າຫ້ອງການສຶກສາສົງຂັ້ນແຂວງ;
   - ຮອງຜູ້ອໍານວຍການໂຮງຮຽນວິຊາຊີບຊັ້ນຕົ້ນ;
   - ຮອງຜູ້ອໍານວຍການໂຮງຮຽນມັດທະຍົມສຶກສາຕອນຕົ້ນ;
   - ຜູ້ອໍານວຍການໂຮງຮຽນປະຖົມສຶກສາ, ໂຮງຮຽນອານຸບານ-ລ້ຽງເດັກ;
   - ຫົວໜ້າໜ່ວຍງານຂອງໂຮງຮຽນມັດທະຍົມສຶກສາຕອນປາຍ ແລະ ມັດທະຍົມສຶກສາສົມບູນ;
   - ຮອງຫົວໜ້າຂະແໜງສັງກັດວິທະຍາໄລ, ໂຮງຮຽນວິຊາຊີບຊັ້ນສູງ;
   - ຫົວໜ້າໜ່ວຍງານຂອງໂຮງຮຽນວິຊາຊີບຊັ້ນກາງ;
   - ຮອງຫົວໜ້າສະຖານີວິທະຍຸ, ໂທລະພາບ, ໜັງສືພິມ, ກອງສະແດງ, ຫໍພິພິທະພັນ, ຫໍສະໝຸດ, ຫໍວັດທະນະທໍາ ແລະ ກອງວິຊາການຢູ່ຂັ້ນແຂວງ;
   - ຮອງຫົວໜ້າດ່ານພາສີຊາຍແດນ, ຫົວໜ້າໜ່ວຍພາສີເຄື່ອນທີ່, ຫົວໜ້າຂະແໜງຂຶ້ນກັບພະແນກສ່ວຍສາອາກອນ, ຫົວໜ້າຂະແໜງຂຶ້ນກັບຄັງເງິນແຫ່ງຊາດຂັ້ນແຂວງ, ຫົວໜ້າສ່ວຍສາອາກອນຂັ້ນເມືອງ, ຫົວໜ້າຄັງເງິນແຫ່ງຊາດຂັ້ນເມືອງ;
   - ຫົວໜ້າໜ່ວຍງານ ຂອງຫ້ອງວ່າການປົກຄອງຂັ້ນເມືອງ ຫຼື ທຽບເທົ່າ;
   - ຮອງຫົວໜ້າຂະແໜງ ຂອງຫ້ອງວ່າການປົກຄອງຂັ້ນແຂວງ ຫຼື ທຽບເທົ່າ;
   - ຮອງຫົວໜ້າຂະແໜງ ຂອງພະແນກຂັ້ນແຂວງ;
   - ຫົວໜ້າໜ່ວຍງານ ຂອງຫ້ອງການ ສັງກັດຫ້ອງວ່າການປົກຄອງຂັ້ນແຂວງ;
   - ຫົວໜ້າໜ່ວຍງານ ຂອງຫ້ອງການ ຂອງຂະແໜງການຂັ້ນເມືອງ;
   - ຕໍາແໜ່ງອື່ນທຽບເທົ່າຕໍາແໜ່ງບໍລິຫານປະເພດດັ່ງກ່າວ ທີ່ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ.

**2. ປະເພດ 7**

- ຮອງຫົວໜ້າຂະແໜງຂອງກົມ ຫຼື ທຽບເທົ່າກົມຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ຫຼື ອົງການທຽບເທົ່າທະບວງ;
- ຮອງຫົວໜ້າຂະແໜງ ຂອງຫົວໜ່ວຍວິຊາການລະດັບ 1 ທີ່ຂຶ້ນກັບກະຊວງ;
- ຈ່າສານ ຂອງສານປະຊາຊົນ;
- ຫົວໜ້າໜ່ວຍງານສັງກັດຂະແໜງການ ຂອງໂຮງໝໍພາກ;
- ຮອງຫົວໜ້າໜ່ວຍງານ ຂອງໂຮງໝໍແຂວງ;
- ຮອງຫົວໜ້າໜ່ວຍງານ ຂອງໂຮງໝໍຊຸມຊົນ ປະເພດ ກ;
- ຮອງຜູ້ອຳນວຍການໂຮງໝໍນ້ອຍ ປະເພດ ກ;
- ຫົວໜ້າຈຸງານ ຂອງໂຮງໝໍຊຸມຊົນ ປະເພດ ຂ;
- ຜູ້ອຳນວຍການໂຮງໝໍນ້ອຍ ປະເພດ ຂ;
- ຫົວໜ້າໜ່ວຍງານສັງກັດຂະແໜງ ຂອງວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ;
- ຮອງຫົວໜ້າໜ່ວຍງານ ຂອງໂຮງຮຽນວິຊາຊີບຊັ້ນກາງ;
- ຫົວໜ້າຈຸງານ ຂອງໂຮງຮຽນວິຊາຊີບຊັ້ນຕົ້ນ;
- ຫົວໜ້າຈຸງານ ຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນ;
- ຮອງຜູ້ອຳນວຍການໂຮງຮຽນປະຖົມສຶກສາສົມບູນ, ໂຮງຮຽນອານຸບານ-ລ້ຽງເດັກ;
- ຮອງຫົວໜ້າໜ່ວຍງານ ຂອງໂຮງຮຽນມັດທະຍົມສຶກສາຕອນປາຍ ແລະ ມັດທະຍົມສຶກສາສົມບູນ;
- ຫົວໜ້າໂຮງຮຽນມູນລະປະຖົມ;
- ຮອງຫົວໜ້າໜ່ວຍພາສີເຄື່ອນທີ່, ຮອງຫົວໜ້າຂະແໜງການ ຂຶ້ນກັບພະແນກສ່ວຍສາອາກອນ, ຮອງຫົວໜ້າຂະແໜງການ ຂຶ້ນກັບຄັງເງິນແຫ່ງຊາດຂັ້ນແຂວງ, ຮອງຫົວໜ້າສ່ວຍສາອາກອນຂັ້ນເມືອງ, ຮອງຫົວໜ້າຄັງເງິນແຫ່ງຊາດຂັ້ນເມືອງ;
- ຫົວໜ້າໜ່ວຍງານ ຂອງຫ້ອງວ່າການປົກຄອງຂັ້ນແຂວງ ຫຼື ທຽບເທົ່າ;
- ຫົວໜ້າໜ່ວຍງານ ຂອງຂະແໜງການ ທີ່ສັງກັດພະແນກຂັ້ນແຂວງ ຫຼື ທຽບເທົ່າ;
- ຮອງຫົວໜ້າໜ່ວຍງານ ຂອງຫ້ອງການ ຂອງຂະແໜງການຂັ້ນເມືອງ;
- ຫົວໜ້າຈຸງານຂຶ້ນກັບກອງວິຊາການຂັ້ນແຂວງ;
- ຕຳແໜ່ງອື່ນ ທຽບເທົ່າຕຳແໜ່ງບໍລິຫານປະເພດດັ່ງກ່າວ ທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**3. ປະເພດ 8**

- ຫົວໜ້າໜ່ວຍງານ ສັງກັດພະແນກ ຂອງກົມ ຫຼື ທຽບເທົ່າກົມ ຂອງກະຊວງ, ອົງການທຽບເທົ່າກະຊວງ, ທະບວງ ຫຼື ອົງການທຽບເທົ່າທະບວງ;
- ຫົວໜ້າໜ່ວຍງານ ສັງກັດຂະແໜງ ຂອງພະແນກ ທີ່ຂຶ້ນກັບໂຮງໝໍສູນກາງ;
- ຮອງຫົວໜ້າໜ່ວຍງານ ສັງກັດຂະແໜງ ຂອງໂຮງໝໍພາກ;
- ຫົວໜ້າຈຸງານ ສັງກັດໜ່ວຍງານ ຂອງໂຮງໝໍແຂວງ, ຫົວໜ້າຈຸງານ ສັງກັດໜ່ວຍງານຂອງໂຮງໝໍຊຸມຊົນ ປະເພດ ກ;
- ຮອງຫົວໜ້າຈຸງານຂອງໂຮງໝໍຊຸມຊົນ ປະເພດ ຂ;
- ຮອງຜູ້ອຳນວຍການໂຮງໝໍນ້ອຍ ປະເພດ ຂ;
- ຮອງຫົວໜ້າໜ່ວຍງານສັງກັດຂະແໜງຂອງວິທະຍາໄລ ຫຼື ໂຮງຮຽນວິຊາຊີບຊັ້ນສູງ;
- ຮອງຫົວໜ້າຈຸງານຕ່າງໆຂອງໂຮງຮຽນວິຊາຊີບຊັ້ນຕົ້ນ;
- ຮອງຫົວໜ້າຈຸງານຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນ;

- ຫົວໜ້າຈຸງານຂອງໂຮງຮຽນປະຖົມສຶກສາສົມບູນ, ໂຮງຮຽນອານຸບານ-ລ້ຽງເດັກ;
- ຫົວໜ້າຈຸງານສັງກັດໜ່ວຍງານທີ່ຂຶ້ນກັບໂຮງຮຽນວິຊາຊີບຊັ້ນກາງ;
- ຫົວໜ້າປ້ອມພາສີ, ຫົວໜ້າໜ່ວຍງານຂຶ້ນກັບຫ້ອງສ່ວຍສາອາກອນຂັ້ນເມືອງ, ຫົວໜ້າໜ່ວຍງານຂຶ້ນກັບຄັງເງິນແຫ່ງຊາດຂັ້ນເມືອງ;
- ຮອງຫົວໜ້າໜ່ວຍງານ ຂອງພະແນກການ ຂອງຂະແໜງການຂັ້ນແຂວງ;
- ຮອງຫົວໜ້າໜ່ວຍງານ ຂອງຫ້ອງວ່າການປົກຄອງຂັ້ນແຂວງ ຫຼື ທຽບເທົ່າ;
- ຫົວໜ້າຈຸງານສັງກັດໜ່ວຍງານ ຂອງຫ້ອງວ່າການປົກຄອງຂັ້ນເມືອງ ຫຼື ທຽບເທົ່າ;
- ຫົວໜ້າຈຸງານສັງກັດໜ່ວຍງານ ຂອງຫ້ອງການ ຂອງຂະແໜງການຂັ້ນເມືອງ;
- ຮອງຫົວໜ້າໜ່ວຍງານ ຂອງກອງວິຊາການຂັ້ນແຂວງ;
- ຕໍາແໜ່ງອື່ນ ທຽບເທົ່າຕໍາແໜ່ງບໍລິຫານປະເພດດັ່ງກ່າວ ທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ເງິນອຸດໜູນ ແລະ ການສິ້ນສຸດ ອຸດໜູນຕໍາແໜ່ງບໍລິຫານ

**ມາດຕາ 6 ເງິນອຸດໜູນຕໍາແໜ່ງ**

ພະນັກງານ-ລັດຖະກອນ ຜູ້ມີຕໍາແໜ່ງບໍລິຫານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 4 ແລະ 5 ຂອງດໍາລັດສະບັບນີ້ ໄດ້ຮັບເງິນອຸດໜູນຕາມລະບຽບການ.

ໃນກໍລະນີໄດ້ຮັບການແຕ່ງຕັ້ງໃຫ້ຮັກສາການແທນຕໍາແໜ່ງບໍລິຫານປະເພດໃດໜຶ່ງ ແຕ່ ຫົກ ເດືອນຂຶ້ນໄປ ຈະໄດ້ຮັບເງິນອຸດໜູນ ຕາມຕໍາແໜ່ງປະເພດຮັກສາການແທນນັ້ນ.

ພະນັກງານ-ລັດຖະກອນ ຜູ້ທີ່ມີຕໍາແໜ່ງບໍລິຫານແລ້ວ ຊຶ່ງໄດ້ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່ ໃຫ້ຖືເອົານິຕິກໍາການແຕ່ງຕັ້ງສະບັບຫຼ້າສຸດ ໃນການອຸດໜູນຕໍາແໜ່ງບໍລິຫານນັ້ນ. ໃນກໍລະນີ ຄວບຕໍາແໜ່ງໃຫ້ຖືເອົາຕໍາແໜ່ງສູງສຸດເປັນບ່ອນອີງໃນການອຸດໜູນ.

**ມາດຕາ 7 ການສິ້ນສຸດອຸດໜູນຕໍາແໜ່ງ**

ການອຸດໜູນຕໍາແໜ່ງຈະສິ້ນສຸດໃນກໍລະນີ ດັ່ງນີ້:

1. ພົ້ນຈາກຕໍາແໜ່ງບໍລິຫານປະເພດໃດໜຶ່ງ ຢ່າງເປັນທາງການແລ້ວ;
2. ໄປສຶກສາຮໍ່າຮຽນ, ບໍາລຸງຍົກລະດັບຢູ່ບ່ອນອື່ນຢ່າງເປັນປະຈໍາແຕ່ ຫົກ ເດືອນຂຶ້ນໄປ ຫຼື ບໍ່ສາມາດປະຕິບັດໜ້າທີ່ວຽກງານໄດ້ ຍ້ອນບັນຫາທາງດ້ານສຸຂະພາບແຕ່ ໜຶ່ງ ປີຂຶ້ນໄປ ຫຼື ຍ້ອນສະພາບແວດລ້ອມອື່ນ ແຕ່ ສາມ ເດືອນຂຶ້ນໄປ;
3. ຖືກແຕ່ງຕັ້ງຢ່າງເປັນທາງການໄປປະຈໍາຢູ່ລັດວິສາຫະກິດ, ອົງການຈັດຕັ້ງສາກົນ ຫຼື ໂຄງການຊ່ວຍເຫຼືອຂອງສາກົນ;
4. ຢຸດເຊົາ ວ່າການແທນ ຫຼື ຮັກສາການແທນ;
5. ປະລະໜ້າທີ່ເປັນເວລາ ສາມສິບວັນ ຕິດຕໍ່ກັນຂຶ້ນໄປ ຫຼື ຖືກລົງວິໄນ ບໍ່ໃຫ້ດໍາລົງຕໍາແໜ່ງຂອງຕົນ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 8 ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

ມອບໃຫ້ຄະນະຈັດຕັ້ງສູນກາງພັກ ແລະ ກະຊວງພາຍໃນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແນະນໍາລະອຽດລົມ ໃນການຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 9 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ ແລະ ປ່ຽນແທນດຳລັດສະບັບເລກທີ 99/ນຍ, ລົງວັນທີ 23 ມິຖຸນາ 2008 ວ່າດ້ວຍຕຳແໜ່ງບໍລິຫານຂອງລັດຖະກອນແຫ່ງສປປ ລາວ ແລະ ດຳລັດສະບັບເລກທີ 044/ນຍ, ລົງວັນທີ 13 ກຸມພາ 2009 ວ່າດ້ວຍດັດສະນີເງິນເດືອນພື້ນຖານ ແລະ ເງິນອຸດໜູນຕຳແໜ່ງຂອງພະນັກງານການນຳລະດັບສູງ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ